# ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

**VOTE 2026**

*ທີ່ລັດມິນນີໂຊຕາທ່ານບໍ່ຈຳເປັນຕ້ອງລໍຖ້າຈົນກ່ວາວັນເລືອກຕັ້ງ - ລົງຄະແນນສຽງແຕ່ທຳອິດນີ້ໂດຍໃຊ້ບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

## ລົງຄະແນນສຽງແຕ່ທຳອິດໄດ້ດ້ວຍຕົວເອງ

ທ່ານສາມາດລົງຄະແນນໃນບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທີ່ສຳນັກງານເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນ 46 ມື້ກ່ອນວັນເລືອກຕັ້ງ ໄປທີ່ mnvotes.gov ເພື່ອເບິ່ງຊົ່ວໂມງແລະສະຖານທີ່

## ລົງຄະແນນສຽງແຕ່ທຳອິດທາງໄປສະນີ

ທ່ານຍັງສາມາດສະໝັກຂໍຮັບບັດລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ສົ່ງໃຫ້ທ່ານທາງໄປສະນີ ທ່ານຈະຕ້ອງໄດ້ສົ່ງບັດລົງຄະແນນສຽງຂອງທ່ານຄືນກ່ອນວັນເລືອກຕັ້ງ

① ສະໝັກຂໍຮັບບັດລົງຄະແນນສຽງໄດ້ເວລາໃດກໍໄດ້ໝົດປີທີ່ mnvotes.gov ພະນັກງານການເລືອກຕັ້ງຈະສົ່ງເອກກະສານການເລືອກຕັ້ງເມື່ອມີບັດລົງຄະແນນສຽງ (ເບິ່ງຂ້າງຫລັງສຳລັບວັນທີ)

② ອ່ານຄຳແນະນຳທີ່ມາພ້ອມກັບບັດລົງຄະແນນສຽງຂອງທ່ານຢ່າງຄັກແນ່! ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບຖ້າວ່າທ່ານກອກແບບຟອມບໍ່ສົມບູນ.

### *ວັນທີຂອງປີ 2026*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, ວັນທີ 11 ສິງຫາ*

***ລົງຄະແນນສຽງຈະນຶດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້***
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 18 ກັນຍາ ເຖິງ 2 ພຶດສະຈິກາ*

***ລົງທະບຽນເພື່ອລົງຄະແນນສຽງ***
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 13 ຕຸລາ ເພື່ອຊ່ວຍປະຢັດເວລາ ໃນວັນເລືອກຕັ້ງ*

***ວັນເລືອກຕັ້ງ***
*ວັນອັງຄານ ວັນທີ 3 ເດືອນພຶດສະຈິກາ*

③ ທ່ານຈະຕ້ອງມີພະຍານເວລາທີ່ທ່ານລົງຄະແນນສຽງແລະຂຽນບັດລົງຄະແນນສຽງຂອງທ່ານ ພະຍານສາມາດເປັນຜູ້ລົງທະບຽນອອກສຽງເລືອກຕັ້ງຂອງລັດມິນນິໂຊຕາຫຼືຈະເປັນໂນທາຣີກໍໄດ້ ພະຍານຂອງທ່ານຕ້ອງໄດ້ເຊັນຊອງຈົດໝາຍລາຍເຊັນແລະບອກທີ່ຢູ່ຂອງເຂົາເຈົ້ານຳ.

④ ຖ້າວ່າທ່ານບໍ່ໄດ້ລົງທະບຽນເພື່ອລົງຄະແນນສຽງແລ້ວ ທ່ານຈະໄດ້ຮັບຄຳຮ້ອງສະໝັກຈົດທະບຽນໃນເອກກະສານຂອງທ່ານ ຖ້າຈະລົງທະບຽນ ໃຫ້ສະແດງໃຫ້ພະຍານເຫັນບັດປະຈຳຕົວອັນໃດກໍໄດ້ທີ

ມີຕໍ່ຂ້າງຫລັງ...

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*

*mnvotes.gov • 1-877-600-VOTE*

# ລົງຄະແນນສຽງແຕ່ທ່ຳອິດໂດຍໃຊ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

**VOTE 2026**

...ສືບຕໍ່ຈາກຂ້າງໜ້າ

ລະບຸໄວ້ໃນຄໍາແນະນໍາ ພະຍານຂອງທ່ານຕ້ອງໄດ້ໝາຍໃສ່ຊອງຈົດໝາຍລາຍເຊັນຂອງທ່ານວ່າບັດປະຈໍາຕົວອັນໃດທີ່ທ່ານສະແດງໃຫ້ເຂົາເຈົ້າເຫັນ.

⑤ ຫຼັງຈາກທີ່ທ່ານໝາຍແລ້ວໆ ໃຫ້ທ່ານສົ່ງບັດລົງຄະແນນສຽງແລະແບບຟອມກັບຄືນມາທັນທີ ບັດລົງຄະແນນສຽງຂອງທ່ານຈະບໍ່ຖືກນັບ ຖ້າວ່າພວກເຮົາໄດ້ຮັບຫຼັງຈາກວັນເລືອກຕັ້ງ ນອກນັ້ນ ທ່ານຍັງສາມາດສົ່ງບັດລົງຄະແນນສຽງຂອງທ່ານກັບຄືນດ້ວຍຕົວເອງໃຫ້ພະນັກງານການເລືອກຕັ້ງທີ່ສົ່ງບັດລົງຄະແນນສຽງໃຫ້ທ່ານ

## *ຕິດຕາມບັດລົງຄະແນນສຽງຂອງທ່ານ*

ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ທຸກບັດທີ່ໄດ້ຮັບທັນເວລາ ແລະກອກແບບຟອມຢ່າງຖືກຕ້ອງຈະຖືກນັບ ໄປທີ່ mnvotes.gov ເພື່ອຕິດຕາມສະຖານະພາບບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ຂອງທ່ານແລະເພື່ອຢືນຢັນວ່າມັນໄດ້ຮັບແລະຖືກນັບ.

| *ວັນທີປີ 2026* | **ການເລືອກຕັ້ງຂັ້ນຕົ້ນ** | **ການເລືອກຕັ້ງທົ່ວໄປ** |
|---|---|---|
| **ບັດລົງຄະແນນສຽງເລີ່ມຕົ້ນສົ່ງ** | ວັນສຸກ ວັນທີ່ 26 ມິຖຸນາ | ວັນສຸກ ວັນທີ່ 18 ກັນຍາ |
| **ແນະນໍາໃຫ້ທ່ານສະໝັກກ່ອນວັນທີ** | ວັນສຸກ ວັນທີ່ 10 ກໍລະກົດ | ວັນສຸກ ວັນທີ່ 2 ຕຸລາ |
| **ວັນທີບັດລົງຄະແນນສຽງຈະຕ້ອງໄດ້ຮັບ** | ວັນເລືອກຕັ້ງ ວັນອັງຄານ ວັນທີ 11 ສິງຫາ | ວັນເລືອກຕັ້ງ ວັນອັງຄານທີ 3 ພຶດສະຈິກາ |

*ສໍານັກງານລັດຖະມົນຕີ ລັດມິນນີໂຊຕາ*

***mnvotes.gov • 1-877-600-VOTE***